ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜໜໜໜໜ✿໙໙໙໙໙

ພະແນກເທັກໂນໂລຊີ ແລະ ການສື່ສານແຂວງ

ບໍລິສັດ ລາວໂຮດສຕິງ ຈຳກັດ

# ຂໍ້ຕົກລົງການໃຊ້ບໍລິການ

ທ່ານສາມາດດາວໂຫລດ ຂໍ້ຕົກລົງໃຊ້ບໍລິການ " ຄຼິກ term.pdf " ເພື່ອເກັບໄວ້ເປັນຫລັກຖານ ເພື່ອຜົນປະໂຫຍດຂອງຕົວທ່ານເອງ ກ່ອນທີ່ທ່ານຈະຕັດສິນໃຈເລືອກບໍລິການຕ່າງໆຂອງ laoshosting.com ກະລຸນາອ່ານລາຍລະອຽດເງື່ອນໄຂ ແລະ ຂໍ້ຕົກລົງ ການໃຫ້ບໍລິການກ່ອນ ເຊິ່ງມີລາຍລະອຽດດັ່ງນີ້:

ເງື່ອນໄຂ ແລະ ຂໍ້ຕົກລົງສະບັບນີ້ ຖືວ່າເປັນອັນເຂົ້າໃຈກັນດີແລ້ວທັງສອງຝ່າຍ **laoswebhost.com** ເຊິ່ງຕໍ່ໄປເອີ້ນວ່າ "ຝ່າຍໃຫ້ບໍລິການ" ແລະ ອີກຝ່າຍຫນຶ່ງ "ຜູ້ໃຊ້ບໍລິການ" ໂດຍຝ່າຍຜູ້ໃຊ້ບໍລິການ ຕ້ອງຍອມຮັບເງື່ອນໄຂການໃຊ້ບໍລິການຕ່າງໆຂອງ laoswebhost.com, ຜູ້ໃຫ້ບໍລິການຂໍສະຫງວນລິຂະສິດທີ່ຈະບໍ່ໃຫ້ບໍລິການເວັບໄຊທ໌ ດັ່ງຕໍ່ໄປນີ້:

1. ສ້າງອີເມວ ຫລື ເວັບໄຊທ໌ ທີ່ຜິດກົດຫມາຍ ການກະທຳນີ້ຕ້ອງຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຜູ້ໃຊ້ບໍລິການແຕ່ພຽງຜູ້ດຽວ ຜູ້ໃຫ້ບໍລິການບໍ່ມີສ່ວນກ່ຽວຂ້ອງທັງຫມົດ.

2. ຫ້າມໃຊ້ບໍລິການນີ້ໄປໃນການເຜີຍແຜ່, ອ້າງອີງ, ອະນາຈານ ຫລື ກະທຳສິ່ງໃດໆ ໃນທາງທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ພັກ-ລັດຖະບານ, ສະຖາບັນ, ສາດສະນາ ແລະ ຊາດ.

3. ຜູ້ໃຊ້ບໍລິການ ຕ້ອງລະບຸຂໍ້ມູນລະອຽດ ໃນການລົງທະບຽນສະຫມັກໃຊ້ບໍລິການກັບທາງພວກເຮົາຕາມຄວາມເປັນຈິງທັງຫມົດ ຫາກພົບວ່າມີຂໍ້ມູນໃດທີ່ບໍ່ເປັນຄວາມຈິງ ທາງຜູ້ໃຫ້ບໍລິການຂໍສະຫງວນລິຂະສິດໃນການລະງັບ ແລະ ຍົກເລີກບໍລິການໂດຍບໍ່ມີການແຈ້ງໃຫ້ຮູ້ລ່ວງຫນ້າ.

4. ຜູ້ໃຊ້ບໍລິການຕ້ອງເກັບລະຫັດຜ່ານທັງຫມົດ ທີ່ໄດ້ຮັບຈາກຜູ້ບໍລິການ ໄວ້ເປັນຄວາມຫລັບ ເພື່ອປ້ອງກັນບໍ່ໃຫ້ຜູ້ທີ່ບໍ່ກ່ຽວຂ້ອງເຂົ້າສູ່ລະບົບ ເພື່ອກະທຳການໃດໆ ອັນອາດຈະກໍ່ໃຫ້ເກີດຄວາມເສຍຫາຍແກ່ຜູ້ໃຊ້ບໍລິການເອງ ແລະ/ຫລື ລະບົບຂອງເຄື່ອງເຊີເວີໂດຍລວມ ຜູ້ໃຊ້ບໍລິການຄວນປ່ຽນລະຫັດຜ່ານ ເປັນສະຫມໍ່າສະເຫມີຢ່າງນ້ອຍ 1 ເດືອນ/ຄັ້ງ.

5. ຫ້າມໃຊ້ບໍລິການນີ້ ໃນການເກັບ ຫລື ເຜີຍແຜ່ຂໍ້ມູນ, ພາບ, ສຽງ ຫລື ຂໍ້ຄວາມ ທີ່ເຂົ້າຂ່າຍຜິດກົດຫມາຍ, ລາມົກອະນາຈານ, ໂປ້ເປືອຍ, ຜິດສິນທຳ, ໂປຼແກຼມເຖື່ອນ ໂດຍສະເພາະແມ່ນໄຟລ໌ mp3, wma ລວມໄປເຖິງບໍລິການ Bittorrent tracker ທີ່ສ້າງຂຶ້ນໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດຢ່າງເປັນທາງການລວມທັງໄຟລ໌ ຫລື ໂປຼແກຼມທີ່ຜິດກົດຫມາຍ ທີ່ໄດ້ເຮັດການປ່ຽນແປງນາມສະກຸນ ຫລື ຖືກບີບອັດດ້ວຍໂປຼແກຼມຕ່າງໆ.

6. ຫ້າມໃຊ້ບໍລິການນີ້ເພື່ອໂຈມຕີລະບົບຂອງເຊີເວີ ຫລື ບຸກຄົນອື່ນ ເຊັ່ນ: mail bomb, hack, Dos, spamming, port, scanning ແລະ ວິທີອື່ນໆ ທີ່ມີຫລັກສະນະ ຫລື ຈຸດປະສົງທີ່ຄ້າຍກັນ ຜູ້ໃຊ້ບໍລິການທີ່ເຜີຍແຜ່ຂໍ້ມູນ ຫລື ໃຊ້ບໍລິການໄປໃນທາງລັກສະນະດັ່ງກ່າວ ຈະຖືວ່າເປັນການທຳຜິດກົດຂອງຜູ້ໃຫ້ບໍລິການ ຈະຖືກຍົກເລີກການໃຫ້ບໍລິການທັນທີ.

7. ຜູ້ໃຫ້ບໍລິການຂໍສະຫງວນລິຂະສິດ ໃນການຍົກເລີກບໍລິການນີ້ທັນທີ ແລະ ຈະດຳເນີນຄະດີຕາມກົດຫມາຍທີ່ກ່ຽວຂ້ອງ ຕໍ່ບຸກຄົນໃດໆກໍ່ຕາມທີ່ພະຍາຍາມ ຫລື ກະທຳການທີ່ເປັນອັນຕະລາຍຕໍ່ລະບົບ ແລະ ເຄື່ອງເຊີ

ເວັບຂອງຜູ້ໃຫ້ບໍລິການ ເຊັ່ນ: ການລະເມີດລະບົບຮັກສາຄວາມປອດໄພ, ການພະຍາຍາມເຈາະລະບົບບໍ່ວ່າຈະເປັນການທົດສອບ ຫລື ທຳລາຍລະບົບ, ການພະຍາຍາມເຂົ້າເຖິງຂໍ້ມູນຂອງເຄື່ອງເຊີເວີ ຫລື ຂໍ້ມູນຜູ້ໃຊ້ບໍລິການຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ໃຫ້ບໍລິການ.

8. ຜູ້ໃຫ້ບໍລິການຂໍບໍ່ຮັບຜິດຊອບກ່ຽວກັບປະສິດທິພາບ, ຄວາມຊັກຊ້າ, ຄວາມຜິດພາດ, ການສູນເສຍຂໍ້ມູນ ຫລື ຄວາມເສຍຫາຍໃດໆ ທີ່ຢູ່ນອກເຫນືອການຄອບຄຸ້ມຂອງຜູ້ໃຫ້ບໍລິການ ແຕ່ຜູ້ໃຫ້ບໍລິການຈະຮັກສາສະຖຽນລະພາບໂດຍລວມຂອງລະບົບໃຫ້ສາມາດໃຊ້ບໍລິການໄດ້ດີຢູ່ສະເຫມີ.

9. ຜູ້ໃຫ້ບໍລິການ ຈະເກັບຮັກສາຂໍ້ມູນຂອງຜູ້ໃຊ້ບໍລິການເປັນຢ່າງດີທີ່ສຸດ ແລະ ຈະບໍ່ມີການເປີດເຜີຍຕໍ່ບຸກຄົນໃດໆ ຍົກເວັ້ນໃນກໍລະນີທີ່ກ່ຽວກັບການພິພາກສາທາງກົດຫມາຍ ຜູ້ບໍລິການຈະໃຫ້ຄວາມຮ່ວມມືກັບເຈົ້າຫນ້າທີ່ ທີ່ກ່ຽວຂ້ອງ ໃນການແຈ້ງຂໍ້ມູນໃດໆ ທີ່ມີປະໂຫຍດຕໍ່ການດຳເນີນຄະດີ.

10. ໃນກໍລະນີທີ່ຜູ້ໃຫ້ບໍລິການໄດ້ຮັບການຮ້ອງຂໍມາຍັງພາກສ່ວນທີ່ກ່ຽວຂ້ອງ ແລະ ພົບເຫດການບໍ່ຖືກຕ້ອງ ຜູ້ໃຫ້ບໍລິການຂໍໃຊ້ສິດທີ່ຈະຍົກເລືອກ ຫລື ລະງັບບໍລິການແກ່ຜູ້ໃຊ້ບໍລິການນັ້ນໆ ເປັນການຊົ່ວຄາວ ເພື່ອທຳການສອບສວນ ແລະ ກວດສອບສາເຫດດັ່ງກ່າວເພື່ອແກ້ໄຂ.

11. ໃນກໍລະນີຜູ້ໃຊ້ບໍລິການ ບໍ່ຊຳລະຄ່າບໍລິການຕາມໄລຍະເວລາທີ່ກຳນົດ ຜູ້ໃຫ້ບໍລິການຂໍສະຫງວນສິດໃນການລະງັບການໃຫ້ບໍລິການຊົ່ວຄາວແກ່ຜູ້ໃຊ້ບໍລິການ ແລະ ຈະດຳເນີນການລຶບຂໍ້ມູນຂອງຜູ້ໃຊ້ບໍລິການອອກຈາກລະບົບທັນທີ ຫາກບໍມີການຊຳລະຄ່າບໍລິການ ພາຍໃນ 1 ເດືອນ (ໜຶ່ງເດືອນ) ນັບຈາກວັນທີ່ເລີ່ມລະງັບການໃຊ້ບໍລິການ.

12. ຍົກເລືອກການໃຫ້ບໍລິການ ອັນເນື່ອງມາຈາກຜູ້ໃຊ້ບໍລິການໄດ້ກະທຳຜິດຂໍ້ຕົກລົງຂ້າງຕົ້ນ ຜູ້ໃຫ້ບໍລິການຂໍຫງວນລິຂະສິດ ບໍ່ຄືນເງິນຄ່າບໍລິການໃຫ້ໃນທຸກກໍລະນີ.

13. ຜູ້ບໍລິການຂໍສະຫງວນສິດໃນການປ່ຽນແປງຂໍ້ຕົກລົງສະບັບນີ້ໄດ້ຕະຫລອດເວລາ ໂດຍບໍ່ຕ້ອງແຈ້ງໃຫ້ຮູ້ລ່ວງຫນ້າ.

14. ຜູ້ໃຫ້ບໍລິການຖືວ່າຜູ້ໃຊ້ບໍລິການທຸກທ່ານ ໄດ້ອ່ານ ແລະ ເຂົ້າໃຈຂໍ້ຕົກລົງສະບັບນີ້ເປັນຢ່າງດີ ແລ້ວຈິ່ງໄດ້ສະຫມັກໃຊ້ບໍລິການຈາກຜູ້ໃຫ້ບໍລິການ.

**ຜູ້ອຳນວຍການ**

**ບໍລິສັດ ລາວເວັບໂຮດສ ຈຳກັດ**

ພິລາວັນ ອິ່ນລາວັນ